# ຈົດໝາຍເຖິງວິສາຫະກິດຮັບຕ້ອນ ແລະ ນັກຝຶກອົບຮົມ

ເມື່ອກວດພະຍາດຢູ່ອົງການສຸຂະພາບ, ນັກຝຶກອົບຮົມຕ້ອງຈື່ວ່າໃຫ້ພົກພາ “ບັດຢັ້ງຢືນການປິ່ນປົວພະຍາດໃຫ້ນັກຝຶກອົບຮົມຂອງ AOTS” (ລຸ່ມນີ້ເອີ້ນຫຍໍ້ວ່າ “ບັດກວດສຸຂະພາບ”), “ໃບຮ້ອງຂໍໃຫ້ໄລ່ເງິນຄ່າໃຊ້ຈ່າຍປິ່ນປົວພະຍາດໃຫ້ແຕ່ລະນັກຝຶກອົບຮົມ” ແລະ “ບັນດາຄວາມ ຕ້ອງການເມື່ອນັກຝຶກອົບຮົມ AOTS ມາກວດພະຍາດ” (ຕິດຄັດໃນ “ບັດກວດສຸຂະພາບ”), ແລະ ເຮັດຕາມເນື້ອໃນຫຍໍ້ລຸ່ມນີ້ເມື່ອກວດ ພະຍາດ. (ໃນກໍລະນີໃບສັ່ງຂອງແພດຢູ່ນອກໂຮງໝໍ, ຮ້ານຂາຍຢາກໍ່ຕ້ອງເຮັດຕາມໃບສັ່ງຂອງແພດ). ຫຼາຍກວ່ານັ້ນ, ໃນເວລາກວດພະຍາດ, ນັກຝຶກອົບຮົມກະລຸນາໄປກັບຄົນຂອງວິສາຫະກິດທີ່ໄດ້ຮັບ.



| AOTS研修生の診療に関する証明書 | 研修生No. 99999 |
|---|---|
| 氏名 | XXXXXXXXXXXXXXXXXX |
| 受入企業 | 一般財団法人 海外産業人材育成協会 |
| 研修期間 | XXXX年XX月XX日－XXXX年XX月XX日 |
| 国・地域 | XXXXXXXXXXXXXX |
| 生年月日 | XXXX.XX.XX　性別 XXXX |
| 発行年月日 | XXXX年XX月XX日 |

(一財) 海外産業人材育成協会
AOTS (HIDA)



研修生個人別診療費請求書

## ຢູ່ໂຕະຕ້ອນຮັບຂອງອົງການສຸຂະພາບ

ແຈ້ງ “ບັດຢັ້ງຢືນການປິ່ນປົວພະຍາດໃຫ້ນັກຝຶກອົບຮົມຂອງ AOTS” (ບັດກວດພະຍາດ) ແລະ “ບັນດາຄວາມ ຕ້ອງການເມື່ອນັກຝຶກອົບຮົມ AOTS ມາກວດພະຍາດ” ໃຫ້ຫ້ອງຕ້ອນຮັບ.

ໝາຍເຫດ) ຄ່າໃຊ້ຈ່າຍປິ່ນປົວພະຍາດທີ່ເກີດຂຶ້ນໃນເວລານັກຝຶກອົບຮົມ, ເຈັບເປັນຍ້ອນອຸບັດຕິເຫດບໍ່ຄາດຄິດ, ຄ່າໃຊ້ຈ່າຍກວດສຸຂະພາບໃນຮອບ 180 ມື້ ນັບແຕ່ກວດຄັ້ງທໍາອິດຫຼືແຕ່ມື້ເຈັບເປັນຈຶ່ງໄດ້ຊໍາລະຄ່າໃຊ້ຈ່າຍຈາກປະກັນໄພ.

ຕື່ມຂໍ້ມູນທີ່ຈໍາເປັນຄືຊື່ ແລະ ນາມສະກຸນນັກຝຶກອົບຮົມ, ອາການຂອງພະຍາດ, ຊື່ນາມສະກຸນຜູ້ຢັ້ງຢືນ, ອື່ນໆ... ໃສ່ “ໃບສັ່ງໄລ່ເງິນຄ່າໃຊ້ຈ່າຍປິ່ນປົວພະຍາດໃຫ້ແຕ່ລະນັກຝຶກອົບຮົມ” ຫຼັງຈາກນັ້ນສົ່ງຄືນໃຫ້ຫ້ອງຕ້ອນຮັບ.

← ຕື່ມເນື້ອໃນໃສ່ໃນ “ບັດກວດສຸຂະພາບ”.

← ຕື່ມບັນດາຂໍ້ມູນທີ່ຈໍາເປັນຄືອາການຂອງພະຍາດ, ວັນເວລາເລີ່ມມີອາການ, ອື່ນໆ...
ຕື່ມຊື່ນາມສະກຸນຂອງຜູ້ໄປນໍາກັນຫຼືຜູ້ແນະນໍາຝຶກອົບຮົມ/ດໍາລົງຊີວິດຢູ່ໃນຂອບເຂດຂອງຜູ້ຢັ້ງຢືນ.

## ວິທີການຄິດໄລ່ເງິນຄ່າໃຊ້ຈ່າຍກວດສຸຂະພາບ

1)ກໍລະນີນັກຝຶກອົບຮົມບໍ່ໄລ່ເງິນຄ່າໃຊ້ຈ່າຍກວດສຸຂະພາບໃຫ້ອົງການສຸຂະພາບ

ແທນຄໍາຂອບໃຈກັບນໍ້າໃຈຂອງອົງການສຸຂະພາບເປັນພິເສດ, ຜູ້ປ່ວຍຈະບໍ່ໄດ້ຖືກຮຽກຮ້ອງໃຫ້ໄລ່ເງິນຄ່າໃຊ້ຈ່າຍກວດສຸຂະພາບຢູ່ຫ້ອງຕ້ອນຮັບແຕ່ທາງອົງການຈະສົ່ງ “ໃບຮ້ອງຂໍໃຫ້ໄລ່ເງິນຄ່າໃຊ້ຈ່າຍປິ່ນປົວພະຍາດໃຫ້ແຕ່ລະນັກຝຶກອົບຮົມ” ເຖິງ AOTS ເພື່ອຕ້ອງການໄລ່ເງິນຄ່າໃຊ້ຈ່າຍກວດສຸຂະພາບ. ດ້ວຍວິທີນີ້, ອົງການສຸຂະພາບຈະໄດ້ຮັບການຄິດໄລ່ເງິນຄ່າໃຊ້ຈ່າຍກວດສຸຂະພາບຈາກບໍລິສັດປະກັນໄພພາຍໃນມື້ສອງມື້ຫຼັງຈາກນັ້ນ.

ດັ່ງນັ້ນ, ໂດຍພື້ນຖານ, ແມ່ນບໍ່ມີການຄິດໄລ່ເງິນຄ່າໃຊ້ຈ່າຍຢູ່ຫ້ອງຕ້ອນຮັບ.

2)ກໍລະນີນັກຝຶກອົບຮົມຫຼືວິສາຫະກິດຮັບຕ້ອນການຄິດໄລ່ເງິນຄ່າໃຊ້ຈ່າຍກວດສຸຂະພາບໃຫ້ອົງການສຸຂະພາບ

ມີກໍລະນີອົງການສຸຂະພາບຕ້ອງການໃຫ້ຄິດໄລ່ເງິນຄ່າປິ່ນປົວພະຍາດຢູ່ຫ້ອງຕ້ອນຮັບ. ໃນຕອນນັ້ນ, ກະລຸນາໃຫ້ຄິດໄລ່ເງິນເລີຍ.

ໃນກໍລະນີນີ້, ວິສາຫະກິດຮັບຕ້ອນຈະສົ່ງ “ໃບຮ້ອງຂໍຄິດໄລ່ເງິນຄ່າໃຊ້ຈ່າຍປິ່ນປົວພະຍາດໃຫ້ແຕ່ລະນັກຝຶກອົບຮົມ” ເຖິງ AOTS ເພື່ອໄດ້ຮັບການຄິດໄລ່ເງິນຄ່າໃຊ້ຈ່າຍກວດສຸຂະພາບຈາກບໍລິສັດປະກັນໄພ.

<ວິທີການຮຽກຮ້ອງໃຫ້ໄລ່ເງິນຄ່າໃຊ້ຈ່າຍປິ່ນປົວພະຍາດ>

1.ຕື່ມວັນທີມື້ທໍາອິດທີ່ມາກວດພະຍາດ ແລະ ຊື່ພະຍາດໃສ່ບ່ອນຫວ່າງຂອງຫ້ອງຜູ້ຢັ້ງຢືນໃນໃບຮຽກຮ້ອງຂ້າງເທິງ (ກໍລະນີບາດເຈັບກໍ່ໃຫ້ຕື່ມມື້ທີ່ບາດເຈັບ ໃສ່).
2.ຕື່ມຊື່ວິສາຫະກິດຮັບຕ້ອນໃສ່ຫ້ອງຜູ້ຮ້ອງຂໍໃຫ້ຄິດໄລ່ເງິນຄ່າໃຊ້ຈ່າຍປິ່ນປົວພະຍາດໃນປີ້ຮ້ອງຂໍຂ້າງເທິງ, ແລະ ຕື່ມບັນຊີໂດຍວິສາຫະກິດຮັບຕ້ອນອອກຊື່ໃສ່ໃນຫົວຂໍ້ບ່ອນຮັບໂອນເງິນ.
3.ຕິດຄັດໃບບິນ (ຕົ້ນສະບັບ) ໃສ່ໃບຮ້ອງຂໍຂ້າງເທິງ ແລະ ສົ່ງໃຫ້ AOTS.
4.ບໍລິສັດປະກັນໄພຈະໂອນເງິນຄ່າໃຊ້ຈ່າຍເຂົ້າບັນຊີກໍານົດເຂົ້າທ້າຍເດືອນຕໍ່ໆໄປ.

## ຢູ່ຮ້ານຂາຍຢາ

ຕອນຈ່າຍເງິນຄ່າຢາຕາມໃບສັ່ງຂອງແພດໃຫ້ຮ້ານຂາຍຢາ ກໍ່ຕ້ອງແຈ້ງ “ໃບຮ້ອງຂໍຄິດໄລ່ເງິນຄ່າໃຊ້ຈ່າຍປິ່ນປົວພະຍາດໃຫ້ແຕ່ລະນັກຝຶກອົບຮົມ”, “ບັດກວດສຸຂະພາບ” ແລະ “ບັນດາຄວາມຕ້ອງການເມື່ອນັກຝຶກອົບຮົມ AOTS ມາກວດພະຍາດ” ກໍ່ຄືຂ້າງເທິງ.
ວິທີການຮຽກຮ້ອງໃຫ້ໄລ່ເງິນກໍ່ຕ້ອງຄ້າຍຄືກັນ. ກໍລະນີວິສາຫະກິດຮັບຕ້ອນຈ່າຍເງິນຄ່າຢາໃຫ້ຮ້ານຂາຍຢາ, ຕ້ອງຕື່ມຊື່ສໍານັກງານຫຼືອົງການສຸຂະພາບທີ່ໄດ້ໄປກວດພະຍາດ ພ້ອມກັບມື້ທໍາອິດທີ່ໄປກວດ, ຊື່ພະຍາດໃສ່ບ່ອນຫວ່າງຂອງຫ້ອງຜູ້ຢັ້ງຢືນໃນ “ໃບຮ້ອງຂໍຄິດໄລ່ເງິນຄ່າໃຊ້ຈ່າຍປິ່ນປົວພະຍາດໃຫ້ແຕ່ລະນັກຝຶກອົບຮົມ”.

## ທີ່ຢູ່ຕິດຕໍ່ພົວພັນ

The Association for Overseas Technical Cooperation and Sustainable Partnerships (AOTS)
Project Accounting Group, Corporate Liaison Department
30-1, Senju-Azuma 1-chome, Adachi-ku, Tokyo 120-8534, Japan TEL: +81-3-3888-8220 FAX: +81-3-3888-8428
URL：www.aots.jp